ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກພັດທະນາຊຸມຊົນ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

# ບົດລາຍງານ

## ການໄປທັດສະນະສຶກສາກ່ຽວກັບ ການນຳໃຊ້ ແລະ ຄຸ້ມຄອງລະບົບນ້ຳລິນ

## ຄັ້ງວັນທີ 16-17 ພຶດສະພາ 2012 ຢູ່ເມືອງວຽງພູຄາ ແຂວງຫລວງນ້ຳທາ





ນະຄອນຫລວງວຽງຈັນ, ວັນທີ 25 ພຶດສະພາ 2012

# ສັງລວມຫຍໍ້

ໃນລະຫວ່າງວັນທີ 14-19 ພຶດສະພາ 2012 ທລຍ ໄດ້ຈັດໃຫ້ມີການໄປທັດສະນະສຶກສາ ກ່ຽວກັບການນຳໃຊ້ ແລະ ຄຸ້ມຄອງລະບົບນ້ຳລິນຢູ່ 3 ບ້ານ (ບ້ານໂພນທອງ, ບ້ານພູລັນໃຕ້ ແລະ ບ້ານປຣາງ) ທີ່ຈັດຕັ້ງປະຕິບັດໂຄງການຍ່ອຍໃນຫົວຂໍ້ນ້ຳລິນ ຫລື ລະບົບນ້ຳສະອາດຂອງເມືອງວຽງພູຄາ ແຂວງຫລວງນ້ຳທາ, ໂດຍມີຈຸດປະສົງຫລັກແມ່ນ ເພື່ອຫັນປ່ຽນຮູບແບບ-ວິທີການ ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງນຳໃຊ້ລະບົບ ່ນ້ຳສະອາດໃຫ້ເໝາະສົມ ແລະ ດີຂື້ນກ່ວາເກົ່າ . ອີງຕາມຈຸດປະສົງດັ່ງກ່າວ, ທລຍ ໄດ້ເລັ່ງໃສ່ຜູ້ເຂົ້າຮ່ວມການໄປທັດສະນະສຶກສາໃນຄັ້ງນີ້ແມ່ນມາຈາກ 4 ເມືອງຂອງສອງແຂວງ (ເມືອງເຊໂປນ, ເມືອງນອງ ແຂວງສະຫວັນນະເຂດ ແລະ ເມືອງສະມ້ວຍ , ເມືອງຕະໂອ້ຍ ແຂວງສາລະວັນ ) ຊຶ່ງລວມມີຂະແໜງສາທາຈາກຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ , ກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານຂັ້ນແຂວງ , ຮອງເຈົ້າເມືອງ, ຜູ້ປະສານງານ ທລຍ ຂັ້ນກຸ່ມບ້ານຈາກ 4 ກຸ່ມບ້ານ, ຄະນະຮັບຜິດຊອບລະບົບນ້ຳລິນຂັ້ນບ້ານຈາກ 4 ບ້ານ ແລະ ພະນັກງານ ທລຍ ໃນແຕ່ລະຂັ້ນ.

ການໄປທັດສະນະສຶກສາໃນຄັ້ງນີ້ ຜູ້ເຂົ້າຮ່ວມສາມາດຖອດຖອນບົດຮຽນໄດ້ຄື : ການຈັດຕັ້ງປະຕິບັດໂຄງການນ້ຳລິນຢູ່ 3 ບ້ານດັ່ງກ່າວ ແມ່ນມີການປະກອບສ່ວນຈາກຊຸມຊົນສະເລ່ຍແມ່ນຫລາຍກ່ວາ 30% ຂອງມູນຄ່າການກໍ່ສ່າງທັງໝົດ, ການຄຸ້ມຄອງນຳໃຊ້ເປັນລະບົບຄົບຖ້ວນເຊັ່ນ : ມີຄະນະກຳມະການປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ , ມີລະບຽບຄຸ້ມຄອງນ້ຳໃຊ້ຈາກຊຸມຊົນເປັນຜູ້ຕັ້ງຂຶ້ນເອງຢ່າງເຄັ່ງຄັດ, ມີກອງທຶນເພືອບູລະນະສ້ອມແປງລະບົບນ້ຳລິນຂອງບ້ານຂຶ້ນ, ກ໊ອກນ້ຳລິນມີເຮືອນມຸງ, ຮົ້ວອ້ອມທີ່ນຳໃຊ້ວັດຖຸດິບຈາກທຳມະຊາດ, ຄອງລະບາຍນ້ຳເສຍ, ປ້າຍລາຍຊື່ຄະນະກຳມະການ ແລະ ຄອບຄົວຜູ້ນ້ຳໃຊ້ນ້ຳໃນແຕ່ລະກ໊ອກ. ບໍລິເວນນອກຮົ້ວມີການຖົມດິນ ແລະ ຕີແໜ້ນ, ສິ່ງເລົ່ານີ້ຖືວ່າເປັນການຄຸ້ມຄອງນຳໃຊ້ລະບົບນ້ຳລິນ ຫລື ນ້ຳສະອາດໃຫ້ມີຄວາມຍືນຍົງ ແລະ ຄຸ້ມຄ່າ . ນອກຈາກນີ້ແຕ່ລະບ້ານຍັງມີການລ້ຽງສັດແບບເປັນລະບົບ ເພື່ອຮັກສາອະນາໄມພາຍໃນບ້ານ, ທັງ 3 ບ້ານຖືວ່າເປັນບ້ານແບບຢ່າງດ້ານສາທາລະນະສຸກ. ໃນໄລຍະເວລາດັ່ງກ່າວເຫັນໄດ້ວ່າ ການໄປທັດສະນະສຶກສາມີຂໍ້ດີຫລັກໆແມ່ນ ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ ແລະ ຮຽນຮູ້ຮູບແບບ ແລະ ວິທີການວາງແຜນພັດທະນາຊຸມຊົນໃນຮູບແບບຂອງ ທລຍ ຫລາຍຂຶ້ນ.

ການໄປທັດສະນະສຶກສາໃນຄັ້ງນີ້ ແມ່ນແນໃສ່ການເສີມສ້າງສະຕິຄວາມເປັນເຈົ້າການຂອງຊຸມຊົນ, ຄວາມຮັບຜິດຊອບຂອງອຳນາດການປົກຄອງຂັ້ນຕ່າງໆ ໃນການນຳໃຊ້ທ່າແຮງທີ່ມີໃນບ້ານ ຫລື ຊຸມຊົນດ້ວຍຫົວຄິດປະດິດສ້າງ ແລະ ພູມປັນຍາຂອງຊາວບ້ານ. ພາຍຫລັງຈາກການໄປທັດສະນະສຶກສາຄັ້ງນີ້ ຜູ້ເຂົ້າຮ່ວມຍັງມີແຜນເພື່ອຜັນຂະຫຍາຍບົດຮຽນທີ່ຖອດຖອນໄດ້ ເພື່ອປັບປຸງ ແລະ ສ້າງບ້ານຕົວແບບກ່ຽວກັບການປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳລິນ ຢູ່ຂອບເຂດທີ່ຕົນເອງຮັບຜິດຊອບ ເພື່ອໃຫ້ເປັນໂຕແບບສຳລັບການການໄປທັດສະນະສຶກສາ ແລະ ແລກປ່ຽນບົດຮຽນຂອງບ້ານອື່ນໆພາຍໃນກຸ່ມບ່ານ, ເມືອງ ແລະ ແຂວງ ຈົນເຖິງສາມາດເປັນບ່ອນແລກປ່ຽນບົດຮຽນຂອງແຂວງອື່ນໆ.

# ສາລະບານ


I. ຈຸດປະສົງ ແລະ ຄາດໝາຍໃນການໄປທັດສະນະສຶກສາ....3

II. ການຈັດທັດສະນະສຶກສາ....4

1. ສະພາບລວມ....4
2. ການລົງຢ້ຽມຢາມລະບົບນໍ້າສະອາດຢູ່ສາມບ້ານຂອງເມືອງວຽງພູຄາ....4

III. ດ້ານດີ ແລະ ຂໍ້ຄົງຄ້າງໃນການໄປທັດສະນະສຶກສາ....8

1. ດ້ານດີ....8
2. ຂໍ້ຄົງຄ້າງ....9

IV. ຄຳຄິດຄຳເຫັນເພື່ອການຈັດຕັ້ງປະຕິບັດການໄປທັດສະນະສຶກສາໃນຕໍ່ໜ້າ....10

V. ແຜນການຜັນຂະຫຍາຍບົດຮຽນທີ່ຖອດຖອນໄດ້ຈາກການໄປທັດສະນະສຶກສາ....10

ເອກະສານຊ້ອນທ້າຍ....13

1. ວາລະການລົງຢ້ຽມຢາມ ແລະ ຖອດຖອນບົດຮຽນຢູ່ ສາມບ້ານຂອງເມືອງວຽງພູຄາ ແຂວງຫລວງນໍ້າທາ....14
2. ລາຍຊື່ຜູ້ເຂົ້າຮ່ວມການໄປທັດສະນະສຶກ....16

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກພັດທະນາຊຸມຊົນ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ຫລຍ)

# ບົດລາຍງານ

**ຮຽ□  ທ່າ□ຜູ້ອຳ□ວຍກາ□ບໍລິຫາ□ກອງທຶ□ຫລຸດຜ່ອ□ຄວາມທຸກຍາກ**

**ເລື່ອງ: ການໄປທັດສະນະສຶກສາກ່ຽວກັບ ການນຳໃຊ້ ແລະ ຄຸ້ມຄອງລະບົບນ້ຳລິນ,**

**ຄັ້ງວັນທີ 14-19 ພຶດສະພາ 2012 ຢູ່ເມືອງວຽງພູຄາ ແຂວງຫລວງນ້ຳທາ**

## I. ຈຸດປະສົງ ແລະ ຄາດໝາຍໃນການໄປທັດສະນະສຶກສາ

### 1. ຈຸດປະສົງ:

1. ເພື່ອແລກປ່ຽ ບົດຮຽ ກ່ຽວກັບ ວິທີກາ ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ຳໃຊ້ລະບົບ ້ຳສະອາດ,
2. ເພື່ອເພີ່ມຂອດກາ ປະສາ ງາ ລະຫວ່າງ ຫລຍ, ຂະແໜງກາ ທີ່ກ່ຽວຂ້ອງ ແລະ ອຳ າດກາ ປົກຄອງຂັ້ນທ້ອງຖິ່ນ.
3. ເພື່ອເຊື່ອມສາ ຮູບແບບ ແລະ ວິທີກາ ເຮັດວຽກ ຂອງ ຫລຍ ເຂົ້າກັບຂະແໜງກາ ທີ່ກ່ຽວຂ້ອງ.

### 2. ຄາດໝາຍທີ່ຈະໄດ້ຮັບ:

1. ຜູ້ເຂົ້າຮ່ວມທັດສະ ະສຶກສາ ໄດ້ບົດຮຽ ແລະ ມີຄວາມເຂົ້າໃຈຢ່າງ ກ່ຽວກັບວິທີກາ ແລະ ຮູບແບບ ໃ ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ຳໃຊ້ລະບົບ ້ຳສະອາດທີ່ໂຄງກາ ຫລຍ ສະໜັບສະໜຸ ,
2. ຫລຍ ແລະ ຂະແໜງກາ ທີ່ກ່ຽວຂ້ອງ ລວມທັງພາກສ່ວ ອື່ນທີ່ກ່ຽວຂ້ອງ ມີກາ ປະສາ ງາ ກັ ຫລາຍ ຂຶ້ນ ໃນວຽກງາ ພັດທະ າຊົ ະບົດ ແລະ ແກ້ໄຂຄວາມທຸກຍາກ,
3. ພາຍຫັລງຈາກທັດສະ ະສຶກສາ ພື້ນທີ່ເປົ້າໝາຍອື່ນໆຂອງ ຫລຍ ຈະສ້າງຕັ້ງບ້ານຕົວແບບໃ ກາ ຄຸ້ມຄອງ ແລະ ຳໃຊ້ລະບົບນ້ຳສະອາດ ຢູ່ໃນທ້ອງຖິ່ນຂອງຕົນ.

## II. ການຈັດທັດສະນະສຶກສາ

### 1. ສະພາບລວມ

ຈາກກາ ໄປຢ້ຽມຢາມການຈັດຕັ້ງປະຕິບັດໂຄງການຍ່ອຍກ່ຽວກັບລະບົບນ້ຳສະອາດ ຢູ່ແຂວງ ຫລວງ ້ຳທາຂອງຜູ້ໃຫ້ທຶ ໂດຍສະເພາະແມ່ ວິທີກາ ປົກປັກຮັກສາ ແລະ ຄຸ້ມຄອງ ່ານໃຊ້ລະບົບ ້ຳສະອາດຂອງຊຸມຊົ ໄດ້ເປັນທີ່ຍອມຮັບ ແລະ ມີຄວາມເຫັນດີຈາກຜູ້ໃຫ້ທຶນ. ເພື່ອຜັນຂະຫຍາຍຮູບແບບ ແລະ ວິທີກາ ປົກປັກຮັກສາ ແລະ ຄຸ້ມຄອງ ້ໃຊ້ລະບົບ ້ຳສະອາດໃຫ້ກັບຊຸມຊົນແຂວງອື່ນໆ ທີ່ໄດ້ຮັບໂຄງການ ຍ່ອຍດ້າ ້ຳສະອາດຈາກ ທລຍ ແລະ ໄດ້ມີກາ ແລກປ່ຽ ບົດຮຽ ກັບຂະແໜງກາ ທີ່ກ່ຽວຂ້ອງກັບກາ ຈັດຫາ ້ຳສະອາດ. ດັ່ງນັ້ນ, ຈຶ່ງໄດ້ຈັດໃຫ້ມີການໄປທັດສະ ະສຶກສາ ແລະ ແລກປ່ຽນບົດຮຽ ກ່ຽວກັບລະບົບ ້ຳສະອາດຢູ່ສາມບ້າ ຂອງເມືອງວຽງພູຄາ ແຂວງຫລວງ ້ຳທາ ໃ ລະຫວ່າງວັ ທີ 14 ຫາ 19 ພຶດສະພາ 2012, ໂດຍໄດ້ເຊີ ເອົາຜູ້ຮັບຜິດຊອບຄຸ້ມຄອງ ່ໃຊ້ ແລະ ບູລະ ະສ້ອມແປງ ້ຳສະອາດຢູ່ບ້າ ທີ່ ທລຍ ສະໜັບສະໜູ ແລະ ເປັ ຕົວແບບຈາກສອງ ເມືອງຂອງແຂວງສະຫວັ ະເຂດ ແລະ ສອງເມືອງຂອງ ແຂວງສາລະວັ ; ຜູ້ປະສາ ງາ ກຸ່ມບ້າ ແລະ ຕາງໜ້າຂະແໜງສາທາລະ ະສຸກ; ຜູ້ປະສາ ງາ ທລຍ ຝ່າຍລັດຂັ້ນເມືອງ ແລະ ຂັ້ນແຂວງ, ພະນັກງາ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ ຈາກທັງສອງແຂວງ ລວມ ທັງໝົດ 37 ທ່າ , ຍິງ 3 ທ່າ (ລາຍຊື່ຜູ້ເຂົ້າຮ່ວມທັງໝົດມີຢູ່ເອກະສານຊ້ອນທ້າຍທີ 3), ໃນໄລຍະເວລາດັ່ງ ກ່າວ ທີມງານທັງໝົດໄດ້ມີການແລກປ່ຽນບົດຮຽນ ແລະ ປະສົບການກັນໃນຫລາຍຫົວຂໍ້ ຊຶ່ງໄດ້ລະບຸລາຍ ລະອຽດໄດ້ບົດລາຍງານສະບັບນີ້.

### 2. ການລົງຢ້ຽມຢາມລະບົບນ້ຳສະອາດຢູ່ສາມບ້ານຂອງເມືອງວຽງພູຄາ

1) ວັນທີ 16 ພຶດສະພາ 2012 ຢ້ຽມຢາມໂຄງການນ້ຳສະອາດ (ລະບົບນ້ຳລິນ) ບ້ານໂພນທອງ, ບ້ານໂພນທອງ ແມ່ນບ້ານຊົນເຜົ່າຂະມຸເປັນສ່ວນໃຫຍ່ມີພົ ລະເມືອງ 497 ຄົ , ຍິງ 206 ຄົ ກາ ກໍ່ສ້າງລະບົບ ້ຳລິ ຢູ່ໃນບ້ານດັ່ງກ່າວນີ້ ເລີ່ມຈັດຕັ້ງ ແລະ ສຳເລັດໃ ຮອບວຽ ທີ 8 ສົກ 2010-11 ມີ ທັງໝົດ 5 ກ໊ອກ. ໂດຍນຳໃຊ້ງົບປະມານລວມທັງໝົດ 111.369.260 ກີບ ໃນນັ້ນ ຊຸມຊົ ປະກອບສ່ວ 25%,
2) ພາກບ່າຍຂອງວັນທີ 16 ພຶດສະພາ 2012 ບ້ານ ພູລັນໄຕ້ ແມ່ນບ້ານຊົນເຜົ່າຂະມຸເປັນສ່ວ ໃຫຍ່ມີພົ ລະເມືອງ 360 ຄົ , ຍິງ 185 ຄົ ກາ ກໍ່ສ້າງລະບົບນ້ຳລິນ ຢູ່ໃນບ້ານດັ່ງກ່າວນີ້ເລີ່ມ ແລະ ສຳເລັດໃ ຮອບວຽ ທີ 8 ສົກ 2010-11 ໂດຍນຳໃຊ້ງົບປະມານທັງໝົດ 89.537.592 ກີບ, ໃນນັ້ນ ຊຸມຊົ ປະກອບສ່ວ 45%,

3) ໃນວັນທີ 17 ພຶດສະພາ 2012 ໄດ້ລົງຢ້ຽມຢາມ ລະບົບນ້ຳລິນຢູ່ບ້າ ປຣາງ ແມ່ນບ້ານຊົນເຜົ່າ ຂະມຸເປັ ສ່ວ ໃຫຍ່ມີພົ ລະເມືອງ 211 ຄົ , ຍິງ 111 ຄົ ກາ ກໍ່ສ້າງລະບົບ ຈ້ຳລິ ຢູ່ໃ ບ້າ ດັ່ງກ່າວນີ້ ເລີ່ມຈາກກາ ຊ່ວຍເຫຼືອຂອງອົງການອື່ນ ADDRA ແຕ່ຊົມໃຊ້ບໍ່ໄດ້ຍ້ອນຫົວງານເປັນ ຫີ ປູ ດັ່ງນັ້ນ ຕົກມາຮອດສົກປີ 2010-11 ຮອບວຽນທີ 8 ຊາວບ້ານຈຶ່ງໄດ້ນຳສະເໜີຕໍ່ກອງ ປະຊຸມ ຄັດເລືອກເອົາເປັນບຸລິມະສິດອັນດັບໜຶ່ງ ແລະ ໄດ້ຮັບການກໍ່ສ້າງສຳເລັດໃນປີດັ່ງກ່າວ ນັ້ນໂດຍນຳ ໃຊ້ງົບປະມາ ທັງໝົດ 106.020.440ກີບ, ໃນນັ້ນ ຊຸມຊົ ປະກອບສ່ວ 26%.

ການລົງຢ້ຽມຢາມໃນແຕ່ລະບ້ານເຫັນວ່າ ແຕ່ລະບ້ານມີການຕ້ອນຮັບການລົງຢ້ຽມຢາມຢ່າງເປັນຂະບວນເຊັ່ນ: ມີອຳນາດການປົກຄອງເມືອງ, ກຸ່ມບ້ານ, ບ້ານ, ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ຂັ້ນແຂວງ, ເຖົ້າແກ່ແນວໂຮມ, ອົງການຈັດຕັ້ງມະຫາຊົນ ແລະ ສະຫະພັນຍິງບ້ານມາຕ້ອນຮັບ ແລະ ແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳສະອາດທັງຍິງ ແລະ ຊາຍຫລາຍກວ່າ 40 ທ່ານໃນແຕ່ລະບ້ານ ແລະ ພິເສດແມ່ນໃນແຕ່ລະກ໊ອກນ້ຳ ທີ່ໄປຢ້ຽມຢາມແມ່ນຈະມີຜູ້ຮັບຜິດຊອບກ໋ອກນ້ຳຂອງໃຜລາວມາລໍຖ້າໃຫ້ຄຳອະທິບາຍ ແລະ ຕອບຄຳຖາມຕ່າງໆຂອງແຂກທີ່ໄປຢ້ຽມຢາມ. ຈາກການໄປແລກປ່ຽນບົດຮຽນຢູ່ບ້ານດັ່ງກ່າວ ຜູ້ທີ່ເຂົ້າຮ່ວມການໄປທັດ ສະນະສຶກສາທັງໝົດສາມາເກັບກຳບົດຮຽນໄດ້ຈາກທັງສາມບ້ານດັ່ງລຸ່ມນີ້:



1) ຊຸມຊົນມີຄວາມສາມັກຄີໃນການປະກອບສ່ວນແຮງງານ ແລະ ວັດຖຸເຂົ້າໃນການກໍ່ສ້າງນ້ຳລິນຂອງບ້ານຈົນສຳເລັດຢ່າງສົມບູນ ແລະ ກໍ່ບໍ່ມີບັນຫາ ຫລື ຂໍ້ຫຍຸ້ງຍາກໃດເລີຍ ເນື່ອງຈາກເປັນບຸລິມະສິດທີ່ຊຸມຊົນໄດ້ຕົກລົງເຫັນດີກັນ ອີງຕາມຄວາມຕ້ອງການທີ່ຈຳເປັນທີ່ສຸດໃນການດຳລົງຊີວິດ ກໍ່ຄືມີນ້ຳສະອາດໃຊ້ໄວ້ກິນ ແລະໃຊ້ໃນຄອບຄົວຢ່າງຖົ່ວເຖິງພາຍໃນບ້ານ,
2) ກອກນ້ຳແຕ່ລະກ໊ອກຕິດຕັ້ງໄວ້ໃນສະຖານທີ່ໆເໝາະສົມສຳລັບຜູ້ນຳໃຊ້ ເຊັ່ນ: ຕິດຕັ້ງກ໊ອກໄວ້ໃນບໍລິເວນຈຸດທີ່ມີຄອບຄົວຫລາຍຄອບຄົວ,ຕິດຕັ້ງໄວ້ເປັນຈຸດໆ ອີງຕາມຈຳນວນຄອບຄົວຜູ້ນຳໃຊ້ນ້ຳ,
3) ບໍລິເວນໃກ້ລານກ໋ອກນ້ຳ ແລະ ຂອບເຂດໄກ້ບ່ອນໃຊ້ນ້ຳ ໄດ້ຖົມດິນຢ່າງແໜ້ນໜາ ແລະ ສູງກ່ວາບ່ອນອື່ນໆໃນບໍລິເວນໃກ້ຄຽງ ເພື່ອບໍ່ມີນ້ຳຂັງ ຫລື ບວກໜອງ,

4) ມີທີ່ລະບາຍນ້ຳເສຍອອກຈາກບໍລິເວນກ໊ອກນ້ຳລິນ ແລະ ມີຄອງລະບາຍນຳເສຍ ອອກໄປຫາຄອງລະບາຍນ້ຳໃນບ່ອນທີ່ຕ່ຳກວ່າ,



5) ເຮັດປ້າຍຫ້າມຖິ້ມຂີ້ເຍື່ອຊະຊາຍ ແລະ ແນະນຳໃຫ້ຖິ້ມຂີ້ເຍື່ອໃສ່ກະຕ່າ ໂດຍມີກະຕ່າຖິ້ມຂີ້ເຍື່ອຢູ່ບໍລິເວນໄກ້ກ໋ອກນ້ຳ,

6) ມີລາຍຊື່ຫົວໜ້າກຸ່ມ ແລະ ຄອບຄົວທີ່ນຳໃຊ້ນ້ຳໃນແຕ່ລະກ໊ອກ ເພື່ອສ້າງຄວາມຮັບຜິດຊອບໃນການປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳລິນ ຫລື ກ໊ອກນ້ຳໃນແຕ່ລະຈຸດ,



7) ມີເຮືອນກ໊ອກນ້ຳ ທີ່ນຳໃຊ້ວັດຖຸທາງທຳມະຊາດທີ່ມີພາຍໃນບ້ານ ເຊັ່ນ: ເສົາໄມ້ ແລະ ຫລັງຄາມຸງຫຍ້າແຝກ, ໃບຕານ, ໃບໄມ້ ແລະໄມ້ຊະນິດອື່ນໆ ທີ່ຊຸມຊົນນິຍົມນຳມາໃຊ້ມຸງຫລັງຄາເຮືອນ,

8) ມີຮົ້ວອ້ອມລານກ໊ອກ ເພື່ອປ້ອງກັນບໍ່ໃຫ້ສັດລ້ຽງທີ່ມີໃນບ້ານເຂົ້າມາຂວັດເຄ່ຍໃນບໍລິເວນກ໊ອກນ້ຳ,



9) ບໍ່ມີຮາວຕາກເຄື່ອງຊະຊາຍຢູ່ບໍລິເວນກ໊ອກນ້ຳ, ແຕ່ມີຮາວຕາກເຄື່ອງຢູ່ໃກ້ສວນຄົວ ແລະ ຢູ່ກ້ອງລ່າງຂອງເຮືອນໃຜເຮືອນລາວ,

10) ມີກົດລະບຽບໃຫ້ຊຸມຊົນນຳໃຊ້ຢ່າງເຄັ່ງຄັດ ເພື່ອຄຸ້ມຄອງ ແລະ ນ້ຳໃຊ້ລະບົບນ້ຳສະອາດໃຫ້ຍືນຍົງເຊັ່ນ: ຜູ້ໃດເຮັດກ໊ອກນ້ຳເພແມ່ນຜູ້ນັ້ນຮັບຜິດຊອບສ້ອມແປງ ຫລື ປ່ຽນໃໝ່, ຫ້າມບໍ່ໃຫ້ເຮັດສວນ; ເຮັດໄຮ່; ໃຊ້ສານເຄມີ ຫລື ຢາປາບສັດຕູພືດ ໃນບໍລິເວນຂອບເຂດປາຕົ້ນນ້ຳ, ບໍ່ໃຫ້ສັດປະເພດ ງົວ; ຄວາຍ; ແບ້ເຂົ້າມາໃນບໍລິເວນບ້ານ ຫລື ເດີ່ນບ້ານ; ໝູແມ່ນໃຫ້ລ້ຽງຂັງ, ແຕ່ຖ້າລະ ເມີດລະບຽບກໍ່ຕ້ອງປັບໃໝຄັ້ງລະ 50,000-100,000ກີບ, ຖ້າເຂົ້າມາຄັ້ງທີສອງກໍ່ຄູນ 2 ຕາມມູນຄ່າທີ່ຕົກລົງກັນ,

11) ຊຸມຊົນພາຍໃນບ້ານມີຄວາມສາມັກຄີໃນການເກັບເງິນສ້າງກອງທຶນບູລະນະສ້ອມແປງລະບົບນ້ຳລິນພາຍໃນບ້ານ ໂດຍເກັບເປັນຫົວຄົນ ຜູ້ທີ່ສາມາດນຳໃຊ້ນ້ຳໄດ້ ຫລື ແຕ່ອາຍຸ 5-15 ປີຂຶ້ນເມືອ,

ເກັບຄົນລະ 500 ຫາ 1,000ກີບ/ຄົນ/ເດືອນ ແລ້ວແຕ່ຊຸມຊົນພາຍໃນບ້ານເຫັນດີ. ປະຈຸບັນບ້ານໂພນທອງສາມາດລະດົມເງິນກອງທຶນໄດ້ 1,014,000ກີບ, ບ້ານພູລັນໃຕ້ມີປະມານ 850,000ກີບ ແລະ ບ້ານປ່າງມີ 868,000ກີບ.

12) ມີຄະນະກຳມະການຮັບຜິດຊອບຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງລະບົບນ້ຳລິນພາຍໃນບ້ານ, ຈຳນວນຄະນະກຳມະການ ແມ່ນອີງຕາມຈຳນວນກ໋ອກນ້ຳ ແລະ ໜ້າວຽກທີ່ໄດ້ແບ່ງປັນຄວາມຮັບຜິດຊອບ ເຊັ່ນ: ແຕ່ລະກ໊ອກນ້ຳຈະມີ 1 ທ່ານທີ່ເປັນ 1 ໃນສະມາຊິກຂອງຄະນະກຳມະການ ເພື່ອລະດົມຄວາມສາມັກຄີຂອງຊຸມຊົນໃນກຸ້ມຂອງຕົ້ນ ພ້ອມກັນອອກແຮງງານອະນະໄມບໍລິເວດກ໊ອກນ້ຳລິນ 1-2ຄັ້ງ/ເດືອນ, ອະນາໄມອ່າງເກັບນ້ຳ ແລະທົ່ວງານນ້ຳລິນ 1-2ເດືອນ/ຄັ້ງ,

13) ບໍລິເວນຂອບເຂດບ້ານມີຄວາມສະອາດທັງສາມບ້ານ ເປັນບ້ານທີ່ປົກປັກຮັກສາສະພາບແວດລ້ອມໄດ້ດີ ເຊັ່ນ: ບໍ່ມີຂີ້ຕົມ ຫລື ບວກໜອງເປະເປື້ອນ, ບໍ່ມີສັດໃຫຍ່ ຫລື ຄອກສັດໃຫຍ່ພາຍໃນບ້ານ, ຄອກເປັດ ຄອກໄກ່ ແລະ ຄອກໝູກໍ່ລ້ຽງໄວ້ໃນຄອກທີ່ໄກ້ຈາກເຮືອນຢູ່,



14) ອຳນາດການປົກຄອງມີຄວາມເຂັ້ມແຂງ, ມີຄວາມສາມັກຄີ ແລະ ຊຸມຊົນກໍ່ມີຄວາມສາມັກຄີ, ດັ່ງນັ້ນຈຶ່ງເຮັດໃຫ້ວຽກງານພັດທະນາ ແລະ ການມີສ່ວນຮ່ວມທຸກຢ່າງດຳເນີນໄປດ້ວຍດີ.

ນອກຈາກບົດຮຽນທີ່ໄດ້ແລ້ວ ຜູ້ເຂົ້າຮ່ວມຈາກແຂວງສະຫວັນນະເຂດ ແລະ ແຂວງສາລະວັນ ຍັງໄດ້ແລກປ່ຽນບົດຮຽນບາງຢ່າງກັບອຳນາດການປົກຄອງ ແລະ ຊຸມຊົນໃນບ້ານທີ່ໄດ້ໄປ ຢ້ຽມຢາມເຊັ່ນ:

1) ການຄຸ້ມຄອງນຳໃຊ້ລະບົບນ້ຳລິນຢູ່ແຂວງສາລະວັນ ແມ່ນມີລັກສະນະຮອບດ້ານ ໂດຍປະຊາຊົນສາມາດນຳໃຊ້ນ້ຳໄດ້ທາງກົງ ແລະ ທາງອ້ອມຄື: ບໍລິເວນກ໊ອກນ້ຳລິນທີ່ໃຊ້ອາບ ແລະ ໃຊ້ຊັກລ້າງຈະມີຄອງລາຍບາຍນ້ຳເສຍອອກໃສ່ອ່າງ ຫລື ຂຸມທີ່ສາມາດເກັບນ້ຳໄວ້ໄດ້ ແລະ ປະຊາຊົນຂອບເຂດໃກ້ຄຽງ ກໍ່ນຳໃຊ້ນ້ຳດັ່ງກ່າວຫົດພືນລະປູກ ແລະ ພືດຜັກສວນຄົວໃນແຕ່ລະມື້ ຈຶ່ງສາມາດເກັບກ່ຽວຜົນຜະລິດໄດ້ດີ, ເມື່ອທຽບໃສ່ຕອນບໍ່ມີນ້ຳ ແມ່ນບໍ່ມີພືນລະປູກ ແລະ ພືດຜັກພຽງພໍ ຫລື ບໍ່ມີເລີຍ.

2) ການລະດົມເງິນກອງທຶນຂອງຊຸມຊົນຢູ່ທັງແຂວງສະຫວັນນະເຂດ ແລະ ແຂວງສາລະວັນ ສ່ວນໃຫຍ່ ແມ່ນເກັບເງິນເປັນຄອບຄົວ ແລະ ກໍ່ພົບຄວາມຫຍຸ້ງຍາກ ເພາະບາງຄອບຄົວທີ່ທຸກຍາກໃນບ້ານແມ່ນ ບໍ່ມີເງິນເຂົ້າກອງທຶນ,
3) ບໍລິເວນກ໊ອກນ້ຳລິນຢູ່ເຂດພາກໃຕ້ ສ່ວນໃຫຍ່ມັກມີໝູມາດຸດເຂດນອກຮົ້ວອ້ອມກ໊ອກ ເຮັດໃຫ້ເປິະ ເປື້ອນ ແລະ ສິ່ງກິນເໝັນໃຫ້ຊຸມຊົນພາຍໃນບ້ານ. ຊຶ່ງເຫັນໄດ້ວ່າມີຄວາມແຕກຕາງກັນລະຫວ່າງວິທີ ການປົກປັກຮັກສາລະບົບນ້ຳລິນ ແລະ ການຮັກສາສິ່ງແວດລ້ອມຂອງ ບ້ານທີ່ໄດ້ໄປຢ້ຽມຢາມທັງ ສາມບ້ານ.

# III. ດ້ານດີ ແລະ ຂໍ້ຄົງຄ້າງໃນການໄປທັດສະນະສຶກສາ

## 1. ດ້ານດີ



- ມີການປະກອບສ່ວນງົບປະມານ ຈາກ ທລຍ ໃນການສ່າງກອງທຶນ ປົກປັກຮັກສາ ແລະ ຄຸ້ມຄອງນຳ ໃຊ້ນຳລິນຂອງບ້ານທີ່ໄດ້ໄປ ຢ້ຽມຢາມ ຊຶ່ງເຮັດໃຫ້ອຳນາດການ ປົກຄອງ ແລະ ຊຸມຊົນພາຍໃນ ບ້ານມີຄວາມຮັບຜິດຊອບ ແລະ ມີ ກຳລັງໃຈໃນການບູລະນະຮັກສາ ແລະ ຄຸ້ມຄອງນ້ຳໃຊ້ລະບົບ ນ້ຳ ລິນໃຫ້ດີຂຶ້ນກ່ວາເກົ່າ ແລະ ສ້າງ ໃຫ້ບ້ານຂອງຕົນເປັນບ້ານຕົວແບບທີ່ດີຕະຫລອດໄປ.
- ຂະແໜງການທີ່ກ່ຽວຂ້ອງທັງຂັ້ນເມືອງ ແລະ ຂັ້ນແຂວງ ຈົນເຖິງຂັ້ນສູນກາງ ພ້ອມທັງຜູ້ປະສານ ງາຍຝ່າຍລັດ ໃຫ້ຄວາມສົນໃຈ ແລະ ເຫັນດີຕໍ່ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດວຽກງານ ທລຍ ຕໍ່ກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ,
- ການໄປທັດສະນະສຶກສາໄດ້ເຮັດໃຫ້ຂະແໜງການທີ່ກ່ຽວຂ້ອງເຂົ້າໃຈ ແລະ ຮຽນຮູ້ຮູບແບບ ແລະ ວິທີການວາງແຜນພັດທະນາຊຸມຊົນໃນຮູບແບບຂອງ ທລຍ ຫລາຍຂຶ້ນ,

- ການໄປທັດສະນະສຶກສາໃນຄັ້ງນີ້ໄດ້ຊ່ວຍເພີ່ມຂໍ້ມູນທີ່ເໝາະສົມໃຫ້ຜູ້ປະສານງານຝ່າຍລັດທັງຂັ້ນເມືອງ ແລະ ຂັ້ນແຂວງ ໃນການສ້າງແຜນການສ້າງບ້ານທີ່ເປັນຈຸດສຸມການພັດທະນາ ເພື່ອເປັນບ່ອນ ໃຫ້ແຂກຕ່າງບ້ານຕ່າງເມືອງ ແລະ ຕ່າງແຂວງໄດ້ມາແລກປ່ຽນບົດຮຽນ,
- ທີມງານ ທລຍ ແຂວງຫລວງນ້ຳທາ ມີການກະກຽມການຕ້ອນຮັບແຂກທີ່ໄປທັດສະນະສຶກສາໄດ້ຢ່າງດີ ແລະ ເໝາະສົມ ໂດຍສະເພາະແມ່ນ ທລຍ ເມືອງຄູນໄດ້ປະສານກັບບ້ານທີ່ໄປຢ້ຽມຢາມທັງສາມບ້ານ ໃຫ້ມີການກະກຽມຄວາມພ້ອມໃນການໄປແລກປ່ຽນບົດຮຽນໄດ້ຢ່າງດີ,
- ທັງສາມບ້ານທີ່ໄປຢ້ຽມຢາມລ້ວນແຕ່ຜັນຂະຫຍາຍຮູບແບບການປົກປັກຮັກສາ ແລະຄຸ້ມຄອງນ້ຳໃຊ້ລະບົບນ້ຳລິນ ທີ່ໄດ້ບົດຮຽນຈາກການໄປທັດສະນະສຶກສາ ຢູ່ແຂວງຊຽງຂວາງໃນປີ 2010,
- ກຳນົດເວລາໃນການໄປແລກປ່ຽນບົດຮຽນໃນແຕ່ລະມື້ ແມ່ນເໝາະສົມ ແລະ ພຽງພໍ.

## 2. ຂໍ້ຄົງຄ້າງ

- ຈຸດທີ່ລົງໄປຢ້ຽມຢາມ ແລະ ແລກປ່ຽນບົດຮຽນໃນເວລາສອງມື້ ແມ່ນຍັງບໍ່ທັນມີຄວາມຫລາກຫລາຍ (ມີພຽງຫົວຂໍ້ນ້ຳສະອາດໝົດທັງສາມບ້ານ) ແລະ ບົດຮຽນທີ່ໄດ້ກໍ່ຄ້າຍຄືກັນໝົດ,
- ມື້ທຳອິດທີ່ມາຮອດມີແຕ່ກອງປະຊຸມນ້ອຍໃນລະຫວ່າງພະນັກງານ ທລຍ ສູນກາງ ແລະ ທລຍ ແຂວງຫລວງນ້ຳທາ, ແຕ່ບໍ່ໄດ້ຈັດກອງປະຊຸມຮ່ວມກັບແຂກທີ່ໄປທັງໝົດ ແລະ ທີງານ ທລຍ ແຂວງຫລວງນ້ຳທາ ເພື່ອແບ່ງພາລະບົດບາດ ແລະ ຄວາມຮັບຜິດຊອບຢ່າງເປັນເອກະພາບຈາກທີມງານທີ່ໄປທັດສະນະສຶກສາທັງໝົດ ແລະ ທລຍ ແຂວງເຈົ້າພາບ ເພື່ອປະກອບເຂົ້າໃນລະບຽບວາລະການດຳເນີນ ການຢ້ຽມຢາມໃນແຕ່ລະບ້ານໃຫ້ຖືກຕ້ອງ ແລະ ເໝາະສົມທຸກຂັ້ນຕອນ,
- ການໃຫ້ຂໍ້ມູນຂອງຕົວແທນບ້ານບາງທ່ານຍັງບໍ່ທັນຊັດເຈນ, ຄຳຕອບທີ່ໄດ້ບໍ່ກົງກັບຄຳຖາມ ຈຶ່ງເຮັດໃຫ້ຜູ້ໄດ້ຮັບຄຳຕອບມີຄວາມສັບສົນ,
- ຜົນຂອງການປະເມີນຜົນຂອງການທັດສະນະສຶກສາຍັງບໍ່ເຫັນເຖິງຮູບແບບ ແລະ ວິທີການທີ່ຈະນຳ ເອົາບົດຮຽນທີ່ຖອດຖອນໄດ້ໃນຄັ້ງນີ້ ໄປຜັນຂະຫຍາຍ ຫລືຈັດຕັ້ງປະຕິບັດໃນຂອບເຂດ ແລະ ພື້ນທີ່ເປົ້າໝາຍຂອງຕົນເທົ່າທີ່ຄວນ.



## IV. ຄຳຄິດຄຳເຫັນເພື່ອການຈັດຕັ້ງປະຕິບັດການໄປທັດສະນະສຶກສາໃນຕໍ່ໜ້າ

1. ຫົວຂໍ້ການໄປທັດສະນະສຶກສາຄວນເພີ່ມຂຶ້ນເປັນ 2 ຫລື 3 ຫົວຂໍ້ເຊັ່ນ: ຫົວຂໍ້ລະບົບນ້ຳສະອາດ ແລະ ສຸກສາລາ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບບົດຮຽນທີ່ຫລາກຫລາຍ ແລະ ຄຸ້ມຄ່າກັບການໄປທັດສະນະສຶກສາ,
2. ການແລກປ່ຽນບົດຮຽນກ່ຽວກັບນ້ຳສະອາດ ຄວນໃຫ້ມີຄວາມຫລາກຫລາຍຂຶ້ນກ່ວາເກົ່າ ຕົວຢ່າງ: ຜູ້ທີ່ມາຢ້ຽມຢາມຄວນຈະຍົກບົດຮຽນທີ່ຕົນໄດ້ຈັດຕັ້ງປະຕິບັດໂຕຈິງມາແລກປ່ຽນກັບບ້ານທີ່ໄປຢ້ຽມຢາມ,
3. ກະກຽມລະບຽບວາລະໃນແຕ່ລະຈຸດທີ່ລົງໄປຢ້ຽມຢາມຢ່າງລະອຽດກ່ວາເກົ່າ ໂດຍໃຫ້ມີການປະກອບຄຳຄິດຄຳເຫັນຂອງຂະແໜງການທີ່ກ່ຽວຂ້ອງໃນດ້ານວິຊາການ ແລະ ໃຫ້ມີຄຳຄິດຄຳເຫັນ ຂອງການນຳຂັ້ນເມືອງ ຫລື ແຂວງ ກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນວຽກງານພັດທະນາ ແລະ ແກ້ໄຂຄວາມທຸກຍາກ,
4. ຈັດໃຫ້ມີການໄປທັດສະນະສຶກສາສຳລັບແຂວງທີ່ຍັງມີຈຸດອ່ອນໃນດ້ານການຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ທັງເປັນການເພີ່ມຂອດປະສານງານລະຫວ່າງ ທລຍ ແລະ ຂະແໜງການທີ່ກ່ຽວຂ້ອງຂຶ້ນຕື່ມ.

## V. ແຜນການຜັນຂະຫຍາຍບົດຮຽນທີ່ຖອດຖອນໄດ້ຈາກການໄປທັດສະນະສຶກສາ

- **<u>ການສ້າງບ້ານທີ່ເປັນຈຸດສຸມຕົວແບບດ້ານການຮັກສາ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳລິນ</u>**

ສ້າງບ້ານທີ່ເປັນຈຸດສຸມຕົວແບບ ດ້ານການປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳລິນຮອບດ້ານຢູ່ແຂວງສະຫວັນນະເຂດ ແລະ ແຂວງສາລະວັນ ໂດຍກຳນົດວ່າ ພາຍໃນເດືອນ ມິຖຸນາ ຫາ ເດືອນ ກໍລະກົດນີ້ ບ້ານນາເຕືອ ກຸ່ມທີ 12 ແລະ ບ້ານສະແກງ ກຸ່ມທີ 3 ຂອງ ເມືອງເຊໂປນ ແລະ ບ້ານປໍກຸ່ມ ທີ 9 ຂອງເມືອງ ນອງ ແຂວງສະຫວັນນະເຂດພ້ອມທັງ ບ້ານຕະຮອກຈະມີການປັບປຸງລະບົບການຄຸ້ມຄອງນ້ຳໃຊ້ລະບົບນ້ຳລິນຂອງບ້ານ ໃນແຕ່ລະດ້ານດັ່ງນີ້:

- ທົບທວນຄືນ ແລະ ປັບປຸງຄະນະປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ລະບົບນ້ຳລິນຂອງບ້ານໃໝ່,
- ທົບທວນຄືນ ແລະ ປັບປຸງລະບຽບການຄຸ້ມຄອງນຳໃຊ້ ແລະ ປົກປັກຮັກສາລະບົບນ້ຳລິນແບບມີສ່ວນຮ່ວມ ແລະ ມີຄວາມເປັນເອກະພາບກັນກັບຊຸມຊົນພາຍໃນບ້ານ,
- ຕັ້ງລະບຽບກ່ຽວກັບການປົກປັກຮັກສາສິ່ງແວດລ້ອມເຊັ່ນ: ຫ້າມເຮັດສວນ ຫລື ເຮັດໄຮ່ ບໍລິເວນຂອບເຂດປ່າຍອດນ້ຳ, ຫ້າມມີການສຳປະທານທີ່ດິນ ເພື່ອການປູກຝັງ ຫລື ລ້ຽງ ສັດເພື່ອປ້ອງກັນບໍ່ໃຫ້ມີການໃຊ້ສານເຄມີທີ່ເປັນພິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ຫ້າມ

ຕັດໄມ້ທຳລາຍປ່າຍອດນ້ຳເດັດຂາດ, ຫ້າມໃຫ້ສັດລ້ຽງປະເພດໝູ, ງົວ, ຄວາຍ ແລະ ແບ້ ມາຂວ້າດ, ດຸດ ແລະ ຂີ້ໃສບໍເວນກົອກນ້ຳ ແລະ ເດີນບ້ານ ແລະ ກຳນົດອັດຕາປັບ ໃໝທີ່ສູງໆສຳລັບຜູ້ທີ່ຂັດຕໍ່ລະບຽບ,

- ກຳນົດມື້ອະນະໄມບໍລິເວນກົອກນ້ຳ ເປັນປະຈຳ 1-2ຄັ້ງ/ເດືອນ, ອະນະໄມອ່າງເກັບນ້ຳເປັນປະຈຳໃນແຕ່ລະເດືອນ ແລະ ອານາໄມບໍລິເວນຍອດນ້ຳ ຢ່າງໜ້ອຍ 2 ເດືອນຕໍ່ຄັ້ງ
- ກຳນົດທິດທາງລະບາຍນ້ຳເສຍ, ສ້ອມແປງຮົ້ວອ້ອມບໍ່ລິເວນກົອກນ້ຳລິນ, ສ້ອງແປງເຮືອນກົອກນ້ຳ ດ້ວຍໄມ້ ແລະ ຫຍ້າທີ່ຊຸມຊົນນິຍົມນຳໃຊ້,
- ຟື້ນຟູກອງທຶນບູລະນະສ້ອມແປງລະບົບນ້ຳລິນຂອງບ້ານ, ທົບທວນຄືນຈຳນວນເງິນທີ່ເກັບຕາມຄວາມເໝາະສົມ ອີງຕາມຄວາມເປັນເອກະພາບກັນຂອງຊຸມຊົນພາຍໃນບ້ານ ແລະ ທົບທວນຄືນຄະນະຄຸມຄອງກອງທຶນທີ່ເໝາະສົມ,

ການປັບປຸງດັ່ງກ່າວ ແມ່ນເພື່ອສ້າງໃຫ້ເປັນບ່ອນໄປຖອດຖອນບົດຮຽນຂອງບ້ານອື່ນໆພາຍໃນເມືອງ ແລະ ແຂວງ ຈົນເຖິງສາມາດເປັນບ່ອນຖອດຖອນບົດຮຽນຂອງແຂວງອື່ນໆພາຍໃນປະເທດ.

### <u>ແຜນການສ້າງບ້ານແບບຢ່າງດ່ານສາທາລະນະສຸກ</u>

ບ້ານທີ່ໄດ້ໄປຢ້ຽມຢາມທັງສາມບ້ານຂອງເມືອງວຽງພູຄາ ຄື: ບ້ານໂພນທອງ, ບ້ານພູລັນໃຕ້ ແລະ ບ້ານປຣາງ, ສາທາສູນກາງ (ຕາງໜ້າສູນຈັດຫານ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ) ແລະ ສາທາແຂວງສະຫວັນ ມີຄຳເຫັນໃຫ້ສາທາແຂວງຫລວງນ້ຳທາຍົກໃຫ້ທັງສາມບ້ານດັ່ງກ່າວເປັນບ້ານແບບຢ່າງດ້ານສາທາລະນະສຸກພາຍໃນປີ 2013 ເນື່ອງຈາກທັງສາມບ້ານເປັນບ້ານທີ່ມີເງື່ອນໄຂດັ່ງນີ້:

- ມີວິດຖ່າຍ,
- ມີນ້ຳສະອາດ ໃຊ້ໄວ້ດື່ມ, ໃຊ້ອາບ ແລະ ໃຊ້ໃນຄອບຄົວ,
- ມີການລ້ຽງສັດໃຫຍ່ ແລະ ນ້ອຍຢ່າງເປັນລະບຽບ, ບໍ່ລ້ຽງແບບຊະຊາຍ.

ດັ່ງນັ້ນກ່ອນປີ 2013 ຕ້ອງສ້າງໃຫ້ທັງສາມບ້ານນີ້ມີເງື່ອນໄຂທີ່ກ່າວມານັ້ນ ຄົບຕາມເປີເຊັນທີ່ສາທາລະນະສຸກຕັ້ງໄວ້ ເພື່ອຕັ້ງເປັນບ້ອນແບບຢ່າງດ້ານສາທາລະນະສຸກ.

### <u>ການນຳໃຊ້ຮູບແບບການປົກປັກຮັກສາ ແລະ ຄຸ້ມຄອງນ້ຳໃຊ້ໂຄງການຍ່ອຍ</u>

ການຈັດຕັ້ງປະຕິບັດ ຮູບແບບການປົກປັກຮັກສາ ແລະ ຄຸ້ມຄອງນ້ຳໃຊ້ໂຄງການຍ່ອຍກ່ຽວກັບລະບົບນ້ຳລິນ ຫລື ນ້ຳສະອາດໃນບ້ານທີ່ ທລຍ ສະໜັບສະໜຸນ ແມ່ນເຮັດໄດ້ດີຫລາຍ, ໃນນາມຜູ້ຕາງໜ້າຂະແໜງສາທາລະນະສຸກ ສູນຈັດຫານ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ ເຫັນວ່າ

ໂຄງການອື່ນໆທີ່ສະໜັບສະໜູນນຳສະອາດຄວນນຳເອົາຮູບແບບທີ່ ທລຍ ຈັດຕັ້ງປະຕິບັດໄປຜັນຂະຫຍາຍ ໃນຂອບເຂດອື່ນທີ່ມີລະບົບນ້ຳລິນຫລືນ້ຳສະອາດ.

- **<u>ການສ້າງບ້ານທີ່ເປັນຈຸດສຸມຕົວແບບດ້ານກິດຈະກຳສ້າງລາຍຮັບ</u>**

ຜູ້ຮັບຜິດຊອບວຽກງານກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານຂັ້ນແຂວງ, ແຂວງສາລະວັນ ມີແຜນວ່າ ຢູ່ແຂວງສາລະວັນນອກຈາກສ້າງບ້ານຕົວແບບໃນວຽກງານນ້ຳສະອາດແລ້ວ ຈະສ້າງບ້ານທີ່ເປັນຈຸດສຸມຕົວແບບຂອງແຂວງ ໃນຫົວຂໍ້ອື່ນໆທີ່ເປັນການສ້າງລາຍຮັບຄຽງຄູ່ກັນ ເຊັ່ນ: ກິດຈະກຳຕ່ຳແຜ່ນ; ປູກຝັງ ແລະ ລ້ຽງສັດ (ຈາກຄຳຄິດເຫັນຂອງຜູ້ປະສານງານຝ່າຍລັດແຂວງສາລະວັນ),

<u>ລາຍງານໂດຍ:</u>

ໃຈປະເສີດ ພັນພູວັນນະ ພະແນກພັດທະນາຊຸມຊົນ

ອາລຸນຍະເດດ ບານຸວົງ ພະແນກຕິດຕາມ ແລະ ປະເມີນຜົນ

<u>ເຫັນດີ ແລະ ຢັ້ງຢືນໂດຍ:</u>

ແສງເພັດ ວັນນະວົງ
ຫົວໜ້າພະແນກພັດທະນະຊຸມຊຸມ

# ເອກະສານຊ້ອນທ້າຍ

1. ວາລະການລົງຢ້ຽມຢາມ ແລະ ຖອດຖອນບົດຮຽນຢູ່ ສາມບ້ານຂອງເມືອງວຽງພູຄາ ແຂວງຫລວງນໍ້າທາ

| ເວລາ/ວັນທີ | ເນື້ອໃນລາຍການ | ສະຖານທີ່ | ຜູ້ຮັບຜິດຊອບ |
|---|---|---|---|
| **ມື້ທີ 1: ວັນພຸດ, ວັນທີ 16 ເດືອນພຶດສະພາ 2012** | | | |
| 08:00-09:20 | ເດີນທາງແຂວງຫາບ້ານໂພນທອງ ເມືອງວຽງພູຄາ | ແຂວງຫາເມືອງ | ທລຍ ຫຼວງນໍ້າທາ |
| 09:30-12:00 | ເຈົ້າພາບບ້ານໂພນທອງ ກ່າວຕ້ອນຮັບແຂກ<br>ແລະ ເຊີນແຂກຢ້ຽມຢາມເບິ່ງຈຸດທີ່ຕັ້ງຂອງນໍ້າລິນ ແລະ ບ້ານ<br>ສະເໜີຈຸດປະສົງ ແລະ ແນະນໍາແຂກເຂົ້າຮ່ວມ<br>ລາຍງານການຈັດຕັ້ງປະຕິບັດວຽກງານນໍ້າລິນຢູ່ບ້ານ<br>ແຂກ ແລະ ເຈົ້າພາບແລກປ່ຽນບົດຮຽນນໍາກັນເຈາະຈີ້ມຖາມ-ຕອບ<br>ກ່າວຄໍາຂອບໃຈ ແລະ ມອບຂອງຂວັນໃຫ້ບ້ານເຈົ້າພາບ | - ບ້ານໂພນທອງ<br>- ຂອບເຂດບ້ານໂພນທອງ<br>- ຫ້ອງການບ້ານ | - ຊາວບ້ານ<br>- ອໍານາດການປົກຄອງບ້ານ<br>- ທລຍ ເມືອງວຽງພູຄາ<br>- ນາຍບ້ານ<br>- ແຂກ ແລະ ເຈົ້າພາບ<br>- ທ່ານບຸນຄົງ, ດຣ. ແກ້ວອຸດົມ |
| 12:00-13:30 | ຮັບປະທານອາຫານທ່ຽງສາມັກຄີຮ່ວມກັບອໍານາດການປົກຄອງບ້ານ | ບ້ານໂພນທອງ | ທລຍ ເມືອງ ແລະ ຊາວໜຸ່ມບ້ານ |
| 13:30-14:00 | ເດີນທາງໄປຢ້ຽມຢາມລະບົບນໍ້າລິນບ້ານພູລັນໃຕ້ ເມືອງວຽງພູຄາ | ບ້ານນໍ້າຟ້າ | ທລຍ ຫຼວງນໍ້າທາ |
| 14:00-16:00 | ເຈົ້າພາບບ້ານພູລັນໃຕ້ ກ່າວຕ້ອນຮັບແຂກ<br>ແລະ ເຊີນແຂກຢ້ຽມຢາມເບິ່ງຈຸດທີ່ຕັ້ງຂອງນໍ້າລິນ ແລະ ບ້ານ<br>ສະເໜີຈຸດປະສົງ ແລະ ແນະນໍາແຂກເຂົ້າຮ່ວມ<br>ລາຍງານການຈັດຕັ້ງປະຕິບັດວຽກງານນໍ້າລິນຢູ່ບ້ານ<br>ແຂກ ແລະ ເຈົ້າພາບແລກປ່ຽນບົດຮຽນນໍາກັນເຈາະຈີ້ມຖາມ-ຕອບ<br>ກ່າວຄໍາຂອບໃຈ ແລະ ມອບຂອງຂວັນໃຫ້ບ້ານເຈົ້າພາບ | - ບ້ານພູລັນໃຕ້<br>- ຂອບເຂດບ້ານພູລັນໃຕ້<br>- ຫ້ອງການບ້ານ | - ຊາວບ້ານ<br>- ອໍານາດການປົກຄອງບ້ານ<br>- ທລຍ ເມືອງວຽງພູຄາ<br>- ນາຍບ້ານ<br>- ແຂກ ແລະ ເຈົ້າພາບ<br>- ທ່ານ ບົວລີ, ທ່ານ ສົມເພັດ |
| 16:00-16:30 | ເດີນທາງກັບທີ່ພັກ | ເມືອງວຽງພູຄາ | ທລຍ ເມືອງວຽງພູຄາ |
| 16:30-18:30 | ຫຼິ້ນກິລາຮ່ວມສາມັກຄີ (ຕີບູນ) | | ທລຍ ແຂວງ ຫລວງນໍ້າທາ ແລະ |

| | | | |
|---|---|---|---|
| | | ເດີນບູນຮ້ານອາຫານເມືອງ | ເມືອງວຽງພູຄາ |
| 19:00-20:30 | ຮັບປະທານອາຫານຄ່ຳສາມັກຄີ | ຮ້ານອາຫານ | ຫລຍ ເມືອງວຽງພູຄາ |
| **ມື້ທີ 2: ວັນພະຫັດ, ວັນທີ 17 ເດືອນພຶດສະພາ 2012** | | | |
| 08:00-08:020 | ເດີນທາງຢ້ຽມຢາມເຂດທ່ອງທ່ຽວຖ້ຳເກົາເຫຼົາ ເມືອງວຽງພູຄາ | ບ້ານນ້ຳແອງ | ທີມງານຢ້ຽມຢາມທັງໝົດ |
| 08:20-09:30 | ທ່ຽວຊົມທຳມະຊາດຖ້ຳເກົາເຫຼົາ | ຖ້ຳເກີນເຫຼົາ | ທີມງານຢ້ຽມຢາມທັງໝົດ |
| 09:30-09:50 | ເດີນທາງຫາບ້ານປຣາງ ເມືອງວຽງພູຄາ | ບ້ານປຣາງ | ທີມງານຢ້ຽມຢາມທັງໝົດ |
| 09:50-12:00 | ເຈົ້າພາບບ້ານປຣາງ ກ່າວຕ້ອນຮັບແຂກ<br>ແລະ ເຊີນແຂກຢ້ຽມຢາມເບິ່ງຈຸດທີ່ຕັ້ງຂອງນ້ຳລີນ ແລະ ບ້ານ ສະເໜີຈຸດປະສົງ ແລະ ແນະນຳແຂກເຂົ້າຮ່ວມ<br>ລາຍງານການຈັດຕັ້ງປະຕິບັດວຽກງານນ້ຳລີນຢູ່ບ້ານ<br>ແຂກ ແລະ ເຈົ້າພາບແລກປ່ຽນບົດຮຽນນຳກັນເຈາະຈີ້ມຖາມ-ຕອບ<br>ກ່າວຄຳຂອບໃຈ ແລະ ມອບຂອງຂວັນໃຫ້ບ້ານເຈົ້າພາບ | - ບ້ານປຣາງ<br>- ຂອບເຂດບ້ານປຣາງ<br>- ຫ້ອງການບ້ານ | - ຊາວບ້ານ<br>- ອຳນາດການປົກຄອງບ້ານ<br>- ຫລຍ ເມືອງວຽງພູຄາ<br>- ນາຍບ້ານ<br>- ແຂກ ແລະ ເຈົ້າພາບ<br>ທ່ານ ຄຳເພົ້າ |
| 12:00-13:30 | ຮັບປະທານອານຫານທ່ຽງສາມັກຄີຢູ່ບ້ານປຼາງ | | ທີມງານຢ້ຽມຢາມທັງໝົດ |
| 13:30-14:30 | ແລກປ່ຽນບົດຮຽນ, ປະສົບການ ແລະ ປະເມີນຜົນການຢ້ຽມຢາມ<br>ກ່າວຄຳຂອບໃຈເຈົ້າພາບ | ສະໂມສອນຂອງບ້ານປຣາງ | ທີມງານຢ້ຽມຢາມທັງໝົດ |
| 14:30-15:15 | ເດີນທາງຫາແຂວງຫລວງນ້ຳທາ | ແຂກເຂົ້າບ້ານພັກ | ຫລຍ ແຂວງ |
| 16:30-18:00 | ຫຼີ້ນກິລາຮ່ວມກັນ: ແຕະບານທີມຊາຍ, ຕີບູນຍິງ ແລະ ຊາຍ | ເດີນກິລາແຂວງ | ຫລຍ ແຂວງ |
| 19:00-21:00 | ຮັບປະທານອາຫານຄ່ຳ ແລະ ກ່າວຄຳຂອບໃຈ ແລະ ມອບ ຂອງຂວັນໃຫ້ການນຳແຂວງເຈົ້າພາບ | ຮ້ານອາຫານແຂວງ ຫລວງນ້ຳທາ | ທີມງານຢ້ຽມຢາມທັງໝົດ |

## 2. ລາຍຊື່ຜູ້ເຂົ້າຮ່ວມການໄປທັດສະນະສຶກ

**ສູ□ກາງ**

1. ດຣ. ແກ້ວອຸດົມ າມເສ າ ຫົວໜ້າພະແ ກບໍລິຫາ ສູ ້ຳສະອາດ ແລະ ອະນະນາໄມສິ່ງແວດລ້ອມ
2. ທ່າ ສົມເພັດ ວາ ິດທະຈອ ຫົວໜ້າ ຫ້ອງກາ ບໍລິຫາ ປະຈຳຫ້ອງ ກາ ພັດທະ າຊົ ະບົດ ແລະ ລົບລ້າງຄວາມທຸກຍາກ, ກົມແຜນການ-ການເງິ
3. . ໃຈປະເສີດ ພັ ພູວັ ະ ພັດທະ າຊຸມຊົ
4. . ອາລຸ ວິໄລ ຕິດຕາມ ແລະ ປະເມີ ຜົ
5. ທ່າ ອາລຸ ຍະເດດ ຕິດຕາມ ແລະ ປະເມີ ຜົ

**ແຂວງສະຫວັ□□ະເຂດ**

1. ທ່າ ບຸ ຄົງ ພົມມະວົງ ຮອງຫົວໜ້າຫ້ອງກາ ຮພຊ ຜູ້ປະສາ ງາ ຝ່າຍລັດຂັ້ນແຂວງ
2. ທ່ານ ສີສົມໄຊ ໄຊຍະກຸມມານ ຮອງຫົວໜ້າຂະແໜງນ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ ສາຫາແຂວງ
3. ທ່ານ ສິນນະຄອນ ອິນທິລາດ ພັດທະນາຊຸມຊົນ ຂັ້ນແຂວງ
4. ທ່າ ເກດສະໜາ ໝື່ນວັນຕີ ຕິດຕາມ-ປະເມີນຜົນ ຂັ້ນແຂວງ
5. ທ່າ ກິແດງ ບຸ ຍະແສງ ພັດທະ າຊຸມຊົ ເມືອງ ເຊໂປ .
6. ທ່າ ຖໍ ມາລາ ໄຊຍະວົງ ພັດທະ າຊຸມຊົ ເມືອງ ອງ.
7. ທ່າ ຊຸມພອ ຊຸມພົ ພັກດີ ພັດທະ າຊຸມຊົ ເມືອງ ທ່າປາງທອງ
8. ທ່າ ລຳເງິ ສີປັດໃຈ ພັດທະ າຊຸມຊົ ເມືອງ ວິລະບຸລີ
9. ທ່າ ອິດສະລະ ພົມມະສອ ພັດທະ າຊຸມຊົ ເມືອງ ພິ .
10. ທ່າ ແກ້ວໄອໄດ ສຸວັ ແ ຮອງເຈົ້າເມືອງ ປະທາ ຊີ້ນຳວຽກງາ ຫຼຸດຜ່ອ ຄວາມທຸກຍາກ ຂັ້ນ ເມືອງໆນອງ
11. ທ່າ ທອງສາ ສາຍລະ ອງ ຈາກຫ້ອງກາ ້ຳສະອາດ ສາທາ ເມືອງໆນອງ
12. ທ່ານ ກາຍອນ ປະສານງານ ຂັ້ນກຸ່ມ, ເມືອງນອງ
13. ທ່າ ປຣາງ ຕົວແທ ບ້າ , ເມືອງນອງ
14. ທ່າ ບຸ ລຽບ ນຸ່ນວັນສີ ກຳມະການພັກເມືອງ ປະທານຊີ້ນຳກຸ່ມບ້ານ, ເມືອງເຊໂປນ
15. ທ່ານ ດຣ ເພັດສົມພອນ ນັນສູນທະວົງ ຮອງຫົວໜ້າຫ້ອງການ ສາທາເມືອງ ຊີ້ນຳວຽກງານກັນພະ ຍາດ, ເມືອງເຊໂປນ
16. ທ່ານ ວັນທາ ປະສານງານ ຂັ້ນກຸ່ມ, ເມືອງນອງ

(ສຳລັບຂົວແທ ບ້າ ໄດ້ແຈ້ງໃຫ້ຊາບໃນມື້ເດີນທາງວ່າ ບໍ່ສະບາຍບໍ່ສາມາດເດີ ທາງໄປຮ່ວມໄດ້)

**<u>ແຂວງສາລະວັ□</u>**

1. ທ່າ ບົວລີ ເຂັມຄຳ ປະສາ ງາ ທລຍ ແຂວງ
2. ທ່າ ສຸກສະໝອ ແສງອາລຸ ພັດທະ າຊຸມຊົ ແຂວງ
3. ທ່າ ເດສຫວາດ ໄຊຊະ ະວົງເພັດ ຕິດຕາມ ແລະ ປະເມີ ຜົ ແຂວງ
4. ທ່າ ຄຳເພົ້າ ຮອງກໍ່ສ້າງຮາກຖາ ແລະ ພັດທະ າຊົ ະບົດຮອບດ້າ ແຂວງ
5. ທ່າ ເສົາເສລີ ສາທາແຂວງ
6. ທ່າ ຕ່ອງຕິສັກ ສິງດາລາວົງ ພັດທະ າຊຸມຊົ ເມືອງສະໝ້ວຍ
7. ທ່າ ບຸ ເຊ ກຳມະກາ ພັກເມືອງໆສະໝ້ວຍ
8. ທ່າ ທອງໃສ ສາທາເມືອງສະໝ້ວຍ
9. ທາ ຄຳແສງ ສາຍຕາລໍ ປະສາ ງາ ກຸ່ມ 4 ເມືອງສະໝ້ວຍ
10. ທ່າ ກົ ທໍ ຄະນະຄຸ່ມຄອງນ້ຳສະອາດ ບ້ານອາວາຍ ກຸ່ມ4, ເມືອງສະໝ້ວຍ
11. າງ ແກ້ວກາ ແກ້ວໂພໄຊ ພັດທະ າຊຸມຊົ ເມືອງໆຕະໂອ້ຍ
12. ທ່າ ບຸ ເຮືອງ ວຽງມະ ົ ຮອງເຈົ້າເມືອງໆຕະໂອ້ຍ
13. ທ່າ ໄຊສິງຄາມ ສາທາເມືອງຕະໂອ້ຍ
14. ທ່າ ບຸ ຫາ ຟອງ ປະສາ ງາ ກຸ່ມ ຫົວໜ້າ ກຸ່ມໂຈະ, ເມືອງຕະໂອ້ຍ
15. ທ່າ ອຳຄູ ຄະນະຄຸ້ມຄອງບ້ານຕະຮວກ, ກຸ່ມໂຈະ, ເມືອງຕະໂອ້ຍ